ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ກະສິກຳ ແລະ ປ່າໄມ້

ກົມກວດກາປ່າໄມ້

ເລກທີ:..0194../ກກປມ

ນະຄອນຫຼວງວຽງຈັນ,ວັນທີ..29..ມັງກອນ..2019

# ໜັງສືແຈ້ງຕອບ

**ເຖິງ:** ບັນດາທ່ານ ປະທານ ອົງການຈັດຕັ້ງທາງສັງຄົມລາວ.

**ເລື່ອງ:** ການອອກໜັງສືຮັບຮອງເອົາຊື່, ສັນຍາລັກ, ໂລໂກ ແລະ ກາຈ້ຳ ຂອງ ອົງການຈັດຕັ້ງທາງສັງຄົມລາວ ໃນການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້.

- ອີງຕາມ ຂໍ້ຕົກລົງ ຂອງ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 3063/ກປ, ລົງວັນທີ 30 ມິຖຸນາ 2017 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກົມກວດກາປ່າໄມ້.
- ອີງຕາມ ໜັງສືສະເໜີ ຂອງຕາງໜ້າຄະນະ ຈັດຕັ້ງທາງສັງຄົມລາວ ໃນການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ ສະບັບເລກທີ 11/ອລກປ, ລົງວັນທີ 28 ທັນວາ 2018.

ກົມກວດກາປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ໃນນາມເປັນຈຸດປະສານງານ ແຜນງານການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ (FLEGT) ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຊາບວ່າ: ກົມກວດກາປ່າໄມ້ ບໍ່ສາມາດອອກໜັງສືຮັບຮອງຊື່, ສັນຍາລັກ, ໂລໂກ ແລະ ກາຈ້ຳ ຂອງອົງການຈັດຕັ້ງທາງສັງຄົມລາວ ໃນການ ຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ໄດ້ ເນື່ອງຈາກວ່າ ບັນດາອົງການຈັດຕັ້ງທາງສັງຄົມແມ່ນຂຶ້ນກັບ ກະຊວງພາຍໃນ ສະນັ້ນເໜີໃຫ້ໄປປະສານພົວພັນນຳພາກສ່ວນດັ່ງກ່າວຕາມພາລະບົດບາດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ບັນດາທ່ານ ປະທານ ອົງການຈັດຕັ້ງທາງສັງຄົມລາວ ເພື່ອຊາບດ້ວຍ.

ຫົວໜ້າກົມກວດກາປ່າໄມ້

ທ.ຫຼອນຄຳ ແສງຈັນອຸດົມ

ບ່ອນນຳສົ່ງ:

- ພະແນກບໍລິຫານ ແລະ ຈັດຕັ້ງ 01 ສະບັບ
- ພາກສ່ວນທີ່ກ່ຽວຂ້ອງ 01 ສະບັບ.
- ເກັບມ້ຽນ 01 ສະບັບ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ກະສິກຳ ແລະ ປ່າໄມ້

ກົມກວດກາປ່າໄມ້

ເລກທີ:...0193......./ກກປມ

ນະຄອນຫຼວງວຽງຈັນ, ວັນທີ..29..ມັງກອນ..2019

**ເຖິງ:** ບັນດາທ່ານ ປະທານ ອົງການຈັດຕັ້ງທາງສັງຄົມລາວ.

**ເລື່ອງ:** ການຮັບຮອງເອົາຄະນະກຳມະການ ແລະ ຕົວແທນຂອງອົງການຈັດຕັ້ງທາງສັງຄົມລາວ ເຂົ້າໃນ ແຜນງານການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ ເພື່ອຈະເປັນຄູ່ຮ່ວມສັນຍາການຄ້າໄມ້ແບບສະໝັກໃຈ ກັບສະຫະພາບເອີຣົບ (LAO CSO FLEGT-VPA).

- ອີງຕາມ ຂໍ້ຕົກລົງຂອງ ນາຍົກລັດຖະມົນຕີ ສະບັບເລກທີ 65/ນຍ, ລົງວັນທີ 19 ສິງຫາ 2015 ວ່າດ້ວຍ ການແຕ່ງຕັ້ງຄະນະກຳມະການຊີ້ນຳລະດັບຊາດ ກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ ແລະ ການເປັນຄູ່ຮ່ວມສັນຍາການຄ້າໄມ້ແບບສະໝັກໃຈ;
- ອີງຕາມ ຂໍ້ຕົກລົງ ຂອງ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 3063/ກປ, ລົງວັນທີ 30 ມິຖຸນາ 2017 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມກວດກາປ່າໄມ້;
- ອີງຕາມ ການຮັບຮອງເອົາການຄັດເລືອກຕົວແທນສະມາຄົມເຂົ້າໃນຂະບວນການແຜນງານຈັດຕັ້ງປະຕິບັດກົດໝາຍປ່າໄມ້ ສະບັບເລກທີ 1278/ກກປມ, ລົງວັນທີ 23 ກັນຍາ 2015;
- ອີງຕາມ ໜັງສືສະເໜີ ຂອງຕາງໜ້າຄະນະຈັດຕັ້ງທາງສັງຄົມລາວ ໃນການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ ສະບັບເລກທີ 11/ອລກປ, ລົງວັນທີ 28 ທັນວາ 2018.

ກົມກວດກາປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ໃນນາມເປັນຈຸດປະສານງານ ແຜນງານການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ (FLEGT) ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ຊາບວ່າ: ກົມກວດກາປ່າໄມ້ ໄດ້ຮັບຊາບ ກ່ຽວກັບ ຂະບວນການເລືອກຕັ້ງ ຄະນະກຳມະການ ແລະ ຕົວແທນ ຂອງອົງການຈັດຕັ້ງທາງສັງຄົມລາວ ເຂົ້າໃນ ແຜນງານການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ ເພື່ອຈະເປັນຄູ່ຮ່ວມສັນຍາ ການຄ້າໄມ້ແບບສະໝັກໃຈ ກັບ ສະຫະພາບເອີຣົບ(LAO CSO FLEGT-VPA).

ກົມກວດກາປ່າໄມ້ ຈຶ່ງໄດ້ອອກໜັງສືສະບັບນີ້ ເພື່ອເປັນການຮັບຮອງເອົາ ແລະ ຄັດເລືອກຕົວແທນຈາກ 5 ຄະນະກຳມະການ ແລະ 5 ຕົວແທນຂອງອົງການຈັດຕັ້ງທາງສັງຄົມເຂົ້າໃນ ແຜນງານການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ ເພື່ອຈະເປັນຄູ່ຮ່ວມສັນຍາ ການຄ້າໄມ້ແບບສະໝັກໃຈກັບ ສະຫະພາບເອີຣົບ ແລະ ປ່ຽນແທນໜັງສືສະບັບເລກທີ 1278/ກກປມ, ລົງວັນທີ 23 ກັນຍາ 2015, ດັ່ງມີລາຍຊື່ລຸ່ມນີ້:

1. ທ່ານ ນາງ ວັນສີ ແສນຍາວົງ ສະມາຄົມແມ່ຍິງຮ່ວມໃຈພັດທະນາ ແຂວງ ບໍ່ແກ້ວ ເປັນປະທານ ຊີ້ນຳລວມ;
2. ທ່ານ ນາງ ຄຳບາງ ທິບພະວົງ ສະມາຄົມຊີວະນາໆພັນລາວ ເປັນຮອງປະທານ (ຜູ້ທີ່ໜຶ່ງ);
3. ທ່ານ ດຣ ບຸນເກື້ອ ວົງສາລາດ ສະມາຄົມພັດທະນາຊຸມຊົນ ແລະ ສິ່ງແວດລ້ອມ ເປັນຮອງປະທານ(ຜູ້ທີ່ສອງ);
4. ທ່ານ ນາງ ທົງນະພາ ພົມມະບຸດ ສະມາຄົມພັດທະນາສີຂຽວ ເປັນຄະນະ;

5. ທ່ານ ອຳພອນ ສຸວັນນະລາດ ສະມາຄົມເພື່ອການສະໜັບສະໜູນ ແລະ ປັບປຸງຊົນນະບົດ ແຂວງ ສະຫວັນນະເຂດ ເປັນຄະນະ.

ສະນັ້ນ, ຈຶ່ງໄດ້ອອກໜັງສືຮັບຮອງ ສະບັບນີ້ໄວ້ ເພື່ອນຳສະເໜີຕໍ່ຫ້ອງການກະຊວງ ກະສິກຳ ແລະ ປ່າໄມ້ ເພື່ອຮັບຊາບ ແລະ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານ ແຜນງານການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ ເພື່ອຈະເປັນຄູ່ຮ່ວມສັນຍາການຄ້າໄມ້ແບບສະໝັກໃຈກັບສະຫະພາບເອີຣົບ.

ດັ່ງນັ້ນ, ຈຶ່ງລາຍງານມາຍັງທ່ານເພື່ອຊາບຕາມເຫັນສົມຄວນດ້ວຍ.

ຫົວໜ້າກົມກວດກາປ່າໄມ້

ກະຊວງກະສິກຳ ແລະ ປ່າໄມ້ ກົມກວດກາປ່າໄມ້

ນ.ຫຼອນຄຳ ແສງຈັນອຸດົມ

<u>ບ່ອນນຳສົ່ງ:</u>

- ພະແນກບໍລິຫານ ແລະ ຈັດຕັ້ງ 01 ສະບັບ
- ພາກສ່ວນທີ່ກ່ຽວຂ້ອງ 01 ສະບັບ.
- ເກັບມ້ຽນ 01 ສະບັບ